ສະຖານເອກອັກຄະລັດຖະທູດສະຫະລັດອາເມລິກາ
ປະຈຳນະຄອນຫລວງວຽງຈັນ, ປະເທດລາວ

ຄຳແນະນຳສຳລັບຜູ້ຍື່ນຄຳຮ້ອງຂໍວີຊາປະເພດຄູ່ຫມັ້ນ

ເຖິງທ່ານ

ສະຖານທູດສະຫະລັດໄດ້ຮັບໃບຄຳຮ້ອງທີ່ອະນຸມັດໃຫ້ທ່ານມີສິດຂໍວີຊາຊົ່ວຄາວປະເພດຄູ່ຫມັ້ນ "K-1" ເພື່ອເດີນທາງໄປແຕ່ງງານກັບຄົນອາເມລິກາ. ***ຂໍໃຫ້ທ່ານອ່ານແລະປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້ ເພື່ອກຽມຍື່ນຄຳຮ້ອງຂໍວີຊາ.***

ຂັ້ນຕອນທີຫນຶ່ງ: ຈົ່ງປະກອບເອກະສານດັ່ງຕໍ່ໄປນີ້.

- ❑ 1. ***ຫນັງສືຜ່ານແດນ:*** ຖ້າທ່ານມີຫນັງສືຜ່ານແດນແລ້ວ ຈົ່ງກວດເບິ່ງໃຫ້ແນ່ໃຈວ່າ ຫນັງສືຜ່ານແດນຂອງທ່ານຕ້ອງມີອາຍຸໃຊ້ໄດ້ອີກຢ່າງຫນ້ອຍ ຫົກເດືອນ ນັບຈາກວັນອອກວີຊາ. ສຳລັບລູກຕິດຕາມ ຄວນຈະມີຫນັງສືຜ່ານແດນຂອງຕົນເອງຕ່າງຫາກ.
- ❑ 2. ***ຮູບຖ່າຍ:*** ຂະຫນາດ 50 χ 50 ມມ, 2 ແຜ່ນ, ພື້ນສີຂາວ, ຖ່າຍບໍ່ເກີນຫົກເດືອນ, ຖ່າຍຫນ້າກົງ, ບໍ່ໃສ່ຫມວກ ຫລື ເອົາສິ່ງຂອງໃດງາມາບຶກຜົມ.
- ❑ 3. ***ໃບຢັ້ງຢືນການເກີດ:*** ຕ້ອງການສູ້ລະ 1 ໃບ, ສຳລັບຕົວທ່ານເອງ ແລະ ລູກທຸກຄົນຂອງທ່ານຜູ້ທີ່ມີອາຍຸຕ່ຳກ່ວາ 21 ປີ(ຖ້າມີ). ໃບຢັ້ງຢືນການເກີດຂອງລູກທຸກຄົນທີ່ອາຍຸຕ່ຳກ່ວາ 21 ປີ ຕ້ອງປະກອບນຳໃຫ້, ເຖິງແມ່ນວ່າ ພວກເຂົາຈະ ບໍ່ຍື່ນຄຳຮ້ອງຂໍວີຊາໄປນຳທ່ານ. ກະລຸນາແປ ໃບຢັ້ງຢືນການເກີດແຕ່ລະໃບ ເປັນພາສາອັງກິດ. ກະລຸນາກວດກາໃຫ້ແນ່ໃຈວ່າ ໃບຢັ້ງຢືນການເກີດຂອງທ່ານມີເລກທີ ຢູ່ເທິງເບື້ອງຂວາຂອງໃບຢັ້ງຢືນ, ທັງມີການປະທັບ ແລະລາຍເຊັນ ຂອງນາຍບ້ານ ແລະທ່ານເຈົ້າເມືອງ ຫຼືເຈົ້າຂວາງຖ້ານີບ່ອນເຊັນຊື່ຂອງເຈົ້າແຂວງຢູ່ໃນໃບຢັ້ງຢືນ.
- ❑ 4. ***ປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ:*** ສຳມະໂນຄົວ ແລະ ບັດປະຈຳຕົວ ໂຕແທ້ ພ້ອມທັງສຳເນົາ.
- ❑ 5. ***ໃບຢັ້ງຢືນການແຕ່ງງານ ແລະ ໃບຢັ້ງຢືນຢ່າຮ້າງ/ໃບຢັ້ງຢືນການເສັຍຊີວິດ:*** ຖ້າທ່ານເຄີຍແຕ່ງງານ, ໃຫ້ປະກອບ ສຳເນົາໃບຢັ້ງຢືນຢ່າ ຮ້າງສຸດທ້າຍຈາກສານ 1 ໃບ ຫລື ສຳເນົາໃບຢັ້ງຢືນການເສັຍຊີວິດຂອງຄູ່ສົມລົດເກົ່າ 1 ໃບ ເພື່ອເປັນການຢັ້ງຢືນເຖິງການແຕ່ງງານຄັ້ງກ່ອນ.

  ອີງຕາມກົດຫມາຍຄອບຂອງສປປລາວ ໃບຢັ້ງຢືນຢ່າຮ້າງຕ້ອງແມ່ນສານເປັນຜູ້ຕັດສິນຊີ້ຂາດ. ຖ້າທ່ານເຄີຍແຕ່ງງານມາກ່ອນ ແລະ ມີໃບຢ່າ ຮ້າງທີ່ຕັດສິນ ໂດຍນາຍບ້ານນັ້ນ ຫມາຍຄວາມວ່າທ່ານຍັງຄົງແຕ່ງງານຢ່າງຖືກຕ້ອງຕາມກົດຫມາຍ ດັ່ງນັ້ນ ທ່ານຕ້ອງໄດ້ເຮັດໃບຢ່າຮ້າງທີ່ ໄດ້ຮັບການຕັດສິນຈາກສານ.
- ❑ 6. ***ຫລັກຖານຂອງການຄ້ຳປະກັນທາງດ້ານການເງິນ:*** ທ່ານຕ້ອງສະແດງຫລັກຖານໃຫ້ເຫັນວ່າ ທ່ານ ແລະ ລູກທັງຫມົດຂອງທ່ານຜູ້ທີ່ຈະເດີນ ທາງຮ່ວມໄປກັບທ່ານ ແມ່ນຈະບໍ່ເປັນພາລະໃຫ້ແກ່ລັດຖະບານອາເມລິກາ ໃນເວລາຢູ່ສະຫະລັດອາເມລິກາ. ແບບຟອມ DS-2000 ທີ່ຕິດຂັດມາພ້ອມນີ້ຈະຊ້ຳ ແຈງລາຍລະອຽດກ່ຽວກັບເອກະສານທີ່ພິສູດວ່າທ່ານຈະບໍ່ເປັນພາລະທາງສັງຄົມຢູ່ສະຫະລັດ.

  ຜູ້ຍື່ນຂໍວີຊາທຸກຄົນຕ້ອງຍື່ນໃບຄ້ຳປະກັນ ຟອມ I-134 ໂຕແທ້ ເຊິ່ງເຊັນຊື່ໂດຍຜູ້ຮັບປະກັນ ພ້ອມກັບຫລັກຖານຄ້ຳປະກັນທາງດ້ານການເງິນດັ່ງລຸ່ມນີ້.
  - ❑ a. ໃບຄ້ຳປະກັນ **ຟອມ I-134**, ທີ່ເຊັນໂດຍຜູ້ຮັບປະກັນ, ໂຕແທ້ (ບໍ່ຮັບສຳເນົາ)
  - ❑ b. ໃບເສັຍອາກອນລາຍໄດ້ປະຈຸບັນ **(ຟອມ 1040 ແລະ ຟອມ W-2)**
  - ❑ c. **ຫນັງສືຈາກບ່ອນເຮັດວຽກ**ຂອງຜູ້ຮັບປະກັນ ທີ່ແຈ້ງອັດຕາເງິນເດືອນ, ບ່ອນເຮັດວຽກ, ປະເພດ, ແລະ ໄລຍະເວລາຂອງວຽກ (ເຊັ່ນ: ເຮັດວຽກຕາມ ລະດູການ, ຊົ່ວຄາວ ຫລື ບໍ່ແນ່ນອນ); ແລະລາຍໄດ້ທີ່ໄດ້ຮັບຈົນເຖິງມື້ນີ້ຂອງປີນີ້.
  - ❑ d. **ໃບຮັບເງິນເດືອນໂຕຫລ້າສຸດ.**
  - ❑ e. **ໃບແຈ້ງຈາກທະນາຄານປະຈຸບັນ**

  ກະຊວງການຕ່າງປະເທດຕ້ອງການໃຫ້ທ່ານຍື່ນຫນັງສືຄ້ຳປະກັນຈາກຜູ້ຮັບປະກັນກ່ອນຈົ່ງຈະອອກວີຊາແຈ້ງອອກໃຫ້. ຜູ້ຮັບປະກັນຕ້ອງສົ່ງ ສຳເນົາໃບຄ້ຳ ປະກັນ ຟອມ I-134 ຊຸດຫນຶ່ງອີກຕ່າງຫາກໃຫ້ທ່ານ ເພື່ອຍື່ນໃຫ້ກະຊວງ. ທ່ານຕ້ອງເອົາໃບຄ້ຳປະກັນ ຟອມ I-134 ໂຕແທ້ໃຫ້ສະຖານທູດອາເມລິກາ.
- ❑ 7. ***ຫລັກຖານສະແດງຄວາມສຳພັນ:*** ທ່ານຈະຕ້ອງສະແດງຫລັກຖານຂອງສາຍສຳພັນການເປັນຄູ່ຫມັ້ນກັບຜູ້ທີ່ຮັບປະກັນເອົາທ່ານ. ເພາະສະນັ້ນ ທ່ານ ຄວນຈະນຳເອົາຈົດຫມາຍ, ຮູບຖ່າຍ, ອີເມວທີ່ຂຽນຫາກັນ, ເຈ້ຍບັນທຶກການໃຊ້ໂທລະສັບ, ໃບບິນການສົ່ງເງິນຫາກັນ ແລະຫລັກຖານອື່ນໆຂອງທ່ານມາ ພ້ອມ. ກະລຸນາ ຢ່າຍື່ນບັດໂທລະສັບທີ່ໃຊ້ແລ້ວ.
- ❑ 8. ***ປະຫວັດຈາກຕຳຫລວດ:*** ຜູ້ຂໍວີຊາທຸກຄົນທີ່ມີອາຍຸ 16 ປີຂຶ້ນໄປຈະຕ້ອງຍື່ນໃບປະຫວັດຈາກຕຳຫລວດ (ໃບແຈ້ງໂທດຫມາຍເລກ 3) ຈາກທາງການ ຕຳຫລວດຂອງແຕ່ລະບ່ອນທີ່ທ່ານເຄີຍໄດ້ອາໃສຢູ່ເປັນເວລາຫົກເດືອນຂຶ້ນໄປຫລັງຈາກມີອາຍຸຄົບ 16 ປີ ຍົກເວັ້ນສຳລັບສະຫະລັດ. ກະລຸນາແປເປັນພາສາ ອັງກິດພ້ອມ. ຖ້າທ່ານບໍ່ໄດ້ກະທຳຄວາມຜິດໃດໆທີ່ຜິດກົດຫມາຍ, ສິ່ງນີ້ຄວນຈະຖືກລະບຸລົງໃນໃບແຈ້ງໂທດຢ່າງຊັດເຈນ.

  ຖ້າທ່ານເຄີຍຢູ່ປະເທດອື່ນນອກຈາກລາວ, ເຈົ້າຫນ້າທີ່ກົງສຸນສາມາດແນະນຳໃຫ້ທ່ານໄດ້ ກ່ຽວກັບການຈະຂໍປະຫວັດຈາກຕຳຫລວດຂອງປະເທດເຫລົ່ານັ້ນ. ໃບແຈ້ງໂທດຕ້ອງໃຊ້ມີອາຍຸໃຊ້ໄດ້ການາຍຫົກເດືອນຂຶ້ນໄປ.

❑ 9. ***ປະຫວັດຄະດີທາງສານແລະປະຫວັດການຖືກຄຸກ:*** ຖ້າທ່ານຖືກຄຳພິພາກສາໃນຄະດີອາຍາ ຫລື ກະທຳຜິດກົດໝາຍອື່ນໆ, ທ່ານຕ້ອງຍື່ນສຳ ເນົາ ບັນທຶກຄະດີຈາກສານແລະທຸກໆບັນທຶກຈາກຄຸກ ທີ່ກວມເອົາໝົດທຸກການກະທຳຜິດກົດໝາຍ.

ທຸກໆເອກະສານຕ້ອງການພຽງແຕ່ 1 ສະບັບເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ***ພວກເຮົາແນະນຳໃຫ້ທ່ານຕ້ອງເກັບເອກະສານເຫລົ່ານີ້ໄວ້ 1 ສະບັບສຳລັບຕົວທ່ານເອງ.***

ຂັ້ນຕອນທີສອງ: ທ່ານຕ້ອງໄປກວດສຸຂະພາບ

❑ 10. ***ການກວດສຸຂະພາບ:*** ຜູ້ຍື່ນຂໍວີຊາທຸກຄົນຕ້ອງໄດ້ກວດສຸຂະພາບ ທີ່ຄະນິນິກຂອງສະຖານທູດອົດສະຕາລີທີ່ວຽງຈັນ ຫລື ທີ່ໂຮງພະຍາບານ ນ້ອດ ອິສເທີນ ວັດທະນາ ທີ່ອຸດອນທານີ, ປະເທດໄທ. ແບບຟອມ ແລະ ຂໍ້ແນະນຳໃນການກວດສຸຂະພາບແມ່ນໄດ້ຕິດຂັດມາພ້ອມນີ້. ຜູ້ຂໍວີຊາ ຕ້ອງຈ່າຍຄ່າກວດສຸຂະພາບ ແລະຄ່າປົ່ນປົວອື່ນໆໃຫ້ທ່ານໝໍ.

❑ 11. ***ການສັກວັກຊີນ:*** ອີງຕາມກົດໝາຍຂອງສະຫະລັດອາເມລິກາແລ້ວ ທຸກຄົນທີ່ຕ້ອງການເດີນທາງເຂົ້າໄປຢູ່ສະຫະລັດຖາວອນ ຕ້ອງໄດ້ທຳການ ສັກວັກ ຊີນ ເພື່ອປ້ອງກັນຫລາຍໆພະຍາດ. ຖ້າທ່ານບໍ່ເຄີຍສັກວັກຊີນມາກ່ອນ, ທ່ານໝໍຈະສັກວັກຊີນໃຫ້ທ່ານ ແລະ ເອົາບັນທຶກການສັກວັກຊີນ ນີ້ໃຫ້ທ່ານ ເພື່ອສະ ແດງວ່າທ່ານໄດ້ຮັບການສັກວັກຊີນແລ້ວ. ນີ້ແມ່ນເອກະສານທີ່ສຳຄັນຫລາຍ ເຊິ່ງທ່ານຈະຕ້ອງ ໃຊ້ໃນເວລາຢູ່ສະຫະລັດ.

ຂັ້ນຕອນທີສາມ: ຕອບຄຳຖາມໃນບັນດາຟອມລຸ່ມນີ້. ຕອບທຸກໆຄຳຖາມເປັນພາສາອັງກິດ. ທຸກໆຄຳຖາມຕ້ອງໄດ້ ຕອບ. ຖ້າຄຳຕອບວ່າບໍ່ມີ ໃຫ້ຂຽນວ່າ "NONE"; ຫ້າມຂຽນວ່າ "N/A" ຫລື "Not Applicable."

12. DS-156 **ຄຳຮ້ອງຂໍວີຊາຊົ່ວຄາວ.**
13. DS-156/Lao **ຄຳຮ້ອງຂໍວີຊາຊົ່ວຄາວເປັນພາສາລາວ.**
14. DS-156K **ຄຳຮ້ອງຂໍວີຊາຊົ່ວຄາວແບບຄູ່ໝັ້ນ.**
15. DS-156K/Lao **ຄຳຮ້ອງຂໍວີຊາຊົ່ວຄາວແບບຄູ່ໝັ້ນເປັນພາສາລາວ.**
16. DS-230 Part I **ໃບຊີວະປະຫວັດ ຄຳຮ້ອງຂໍວີຊາຖາວອນ.**

ຖ້າລູກຂອງທ່ານຂໍວີຊາໄປພ້ອມກັບທ່ານ, ລູກແຕ່ລະຄົນຕ້ອງຕອບຟອມ DS-156, DS-156/Lao, ແລະ DS-230 Part I ຜູ້ລະ 1 ສະບັບ. ພ້ອມນັ້ນກໍ່ຕ້ອງນຳເອົາ ເອກະສານຫລັກຖານທີ່ຢັ້ງຢືນວ່າລູກຜູ້ນັ້ນແມ່ນລູກຄົງຂອງທ່ານ ເຊັ່ນ: ຮູບຖ່າຍຂອງທ່ານກັບລູກຂອງທ່ານໃນແຕ່ລະໄລຍະເວລາທີ່ແຕກຕ່າງກັນ, ແລະ ອື່ນໆ...

ຂັ້ນຕອນທີສີ່: ເມື່ອທ່ານໄດ້ປະກອບເອກະສານທັງໝົດແລ້ວ, ກະລຸນາອ່ານຂໍ້ຄວາມຂ້າງລຸ່ມໃຫ້ລະອຽດ, ລົງວັນທີ ແລະ ເຊັນຊື່, ແລະ ສົ່ງເອກະສານ ສະບັບນີ້ໃຫ້ພະແນກກົງສຸນຂອງສະຖານທູດສະຫະລັດອາເມລິກາ ເພື່ອພວກເຮົາຈະໄດ້ນັດທ່ານມາສຳພາດຂໍວີຊາ. ທ່ານຕ້ອງນຳເອົາເອກະສານທັງໝົດ ຕາມລາຍການຂ້າງເທິງມາພ້ອມເພື່ອສຳພາດໃນມື້ນັດສຳພາດ.

ດ້ວຍຄວາມຮັກແພງ,

ຫົວໜ້າກົງສຸນສະຫະລັດອາເມລິກາ

ດ້ວຍເຫດນີ້ ຂ້າພະເຈົ້າຂໍຢັ້ງຢືນວ່າ ຂ້າພະເຈົ້າໄດ້ປະກອບທຸກໆເອກະສານທີ່ໃຊ້ໄດ້ຕາມລາຍການຂ້າງເທິງນີ້. ດ້ວຍເຫດນີ້ ຂ້າພະເຈົ້າຕ້ອງການໃຫ້ ຂ້າພະເຈົ້າໄດ້ຖືກອະນຸຍາດໃຫ້ສຳພາດໃນໄວໆນີ້ ກັບທ່ານເຈົ້າໜ້າທີ່ກົງສຸນ. ຂ້າພະເຈົ້າຮູ້ດີວ່າ ບໍ່ມີການຮັບປະກັນໃດໆທີ່ສາມາດເຮັດໃຫ້ຂ້າພະເຈົ້າ ໄດ້ຮັບວີຊາແບບຄູ່ໝັ້ນ ຈົນກ່ວາວ່າຫລັງຈາກທີ່ຂ້າພະເຈົ້າໄດ້ຖືກສຳພາດຈາກທ່ານເຈົ້າໜ້າທີ່ກົງສຸນ ແລະ ນັ້ນມັນເປັນຄວາມຮັບຜິດຊອບຂອງ ຂ້າພະເຈົ້າໂດຍກົງ ທີ່ຕ້ອງສະແດງໃຫ້ເຫັນວ່າ ຕົນເອງມີຄຸນສົມບັດທີ່ຈະໄດ້ຮັບວີຊາ.

ໃນເວລາທີ່ຂ້າພະເຈົ້າເຂົ້າສຳພາດ, ຂ້າພະເຈົ້າມີຈຸດປະສົງຈະສຳພາດ

17. ຜູ້ດຽວ

18. ພ້ອມກັນກັບລູກທີ່ມີລາຍຊື່ລຸ່ມນີ້: (ຂຽນຊື່ແລະນາມສະກຸນຂອງລູກທຸກຄົນທີ່ຈະເດີນທາງຮ່ວມໄປກັບທ່ານ.)

1. _____ 2. _____
3. _____ 4. _____

_____ ຊື່ແລະນາມສະກຸນຜູ້ຂໍວີຊາ

_____ ລາຍເຊັນ

_____ ທີ່ຢູ່ທາງໄປສະນີ

_____ ວັນທີ

_____ ເບີໂທລະສັບ

_____ ທີ່ຢູ່ທາງອີເມວ (e-mail), (ຖ້າມີ)